
ສັງຄົມຂອງເຮົາ


“ເຈົ້າກຳລັງເຮັດຫຍັງຢູ່?”
“ຂ້ອຍກຳລັງອ່ານປຶ້ມບັນທຶກ ປະຈຳວັນຂອງຂ້ອຍ.”
“ມີເລື່ອງຫຍັງແດ່ນໍ?”
“ເລື່ອງຕອນທີ່ຂ້ອຍເປັນ ເດັກນ້ອຍ. ຟັງເດີ! ຂ້ອຍ ຊິເລົ່າໃຫ້ຟັງໜ້ອຍໜຶ່ງ.”
M. CH-SOKHA


ຕອນທີ່ຂ້ອຍຍັງນ້ອຍ ຂ້ອຍອາໄສຢູ່ນຳປ້າ.
ຕອນນັ້ນ ຂ້ອຍຢາກເຂົ້າໂຮງຮຽນຫຼາຍ.
ຫຼາຍຄັ້ງ ຂ້ອຍລັກໄປຈອບເບິ່ງເຂົາເຈົ້າ
ຮຽນໜັງສືຢູ່ໂຮງຮຽນ.
“ນາຍຄູ
ຫຼານຂໍຮຽນໜັງສືນຳໄດ້ບໍ?”
“ໄດ້. ແຕ່ຕ້ອງຈ່າຍ
ເງິນກ່ອນ.”
“ຫຼານບໍ່ມີເງິນ
ດອກ ນາຍຄູ.”
“ຖ້າເປັນແນວນັ້ນ
ຕ້ອງເຮັດວຽກໃຫ້
ນາຍຄູ.”
“ໂດຍ ນາຍຄູ
ຫຼານຈະເຮັດທຸກສິ່ງ
ຕາມທີ່ ນາຍຄູ ບອກ.”
M.CH.SOKHA
ຕັ້ງແຕ່ມື້ນັ້ນມາ ຂ້ອຍຕ້ອງໄປໂຮງຮຽນແຕ່ເຊົ້າ
ເພື່ອໃຫ້ມີເວລາໄປເຮັດວຽກກ່ອນເຂົ້າຫ້ອງຮຽນ.
ໂຮງຮຽນ


“ຂ້ອຍບໍ່ມີເວລາຫຼິ້ນກັບໝູ່ເພື່ອນເລີຍ.”


ເຖິງແມ່ນວ່າຂ້ອຍໄດ້ຄະແນນດີ ນາຍຄູ
ກໍຍັງວ່າຂ້ອຍເປັນນັກຮຽນອ່ອນຕະຫຼອດ.


“ໂອ້ ! ເປັນຕາອີດູຕົນເຈົ້າແທ້.”
“ແຕ່ຂ້ອຍກໍຮູ້ຈັກ
ກັບລຸ່ນອ້າຍຄົນໜຶ່ງ.”


“ໂອ້ ! ນ້ອງ ເຈົ້າເປັນຫຍັງ?”
ຂ້ອຍຈະເລົ່າເລື່ອງທຸກເລື່ອງ ທຸກເຫດການ ທີ່ເກີດຂຶ້ນກັບຂ້ອຍ ໃຫ້ເຈົ້າຟັງ.



ຄວາມບໍ່ຍຸດຕິທຳ
ສໍ້ໂກງ
ຂົ່ມເຫັງ
ຊື້ຈ້າງ
"ທຸກສິ່ງນີ້ ພຣະເຈົ້າ ບໍ່ມັກ. ສິ່ງເຫຼົ່ານີ້ ພຣະເຈົ້າ ຊັງຫຼາຍ."
"ແຕ່ທຸກສິ່ງຕໍ່ໄປນີ້ ເປັນສິ່ງທີ່ ພຣະເຈົ້າ ພໍໃຈ."
ນະມັດສະການ ພຣະເຈົ້າ
ເບິ່ງແຍງສິ່ງ ທີ່ຢູ່ໃນໂລກ
ໂຮງຮຽນ
ການສຶກສາຮ່ຳຮຽນ
ຄວາມຍຸດຕິທຳ
ແຜນການຂອງ ພຣະເຈົ້າ
ຊ່ວຍເຫຼືອ ເຊິ່ງກັນແລະກັນ
M-CH-SOKHA


ໂອ້! ພຣະເຈົ້າ ຢາກໃຫ້ທຸກສິ່ງ ເທິງແຜ່ນດິນໂລກນີ້ ເປັນໄປຕາມ ພຣະປະສົງ ດັ່ງດຽວໃນສະຫວັນ ບໍ?
ແມ່ນແທ້ ! ຖ້າເປັນແນວນັ້ນ ສັງຄົມຂອງພວກເຮົາ ຈະມີຄວາມຮັກ ແລະ ຄວາມຍຸດຕິທຳຫຼາຍຂຶ້ນ.


ຄຳຖາມສົນທະນາ
1 ເຈົ້າເຄີຍຖືກເຮັດໃສ່ຢ່າງບໍ່ຍຸດຕິທຳບໍ?
2 ເຈົ້າເຄີຍເຫັນຄົນເຮັດສິ່ງທີ່ຖືກຕ້ອງຕາມ
ທີ່ ພຣະເຈົ້າ ຕ້ອງການບໍ?


ກິດຈະກຳ
ເຮົາສາມາດອະທິຖານຄົນດຽວ
ຫຼື ດ້ວຍກັນກັບໝູ່ເພື່ອນກໍໄດ້.
ເຮົາຄວນອ່ານພຣະຄຳພີເລື້ອຍໆ
ເພື່ອຮູ້ທູນຂໍໃນສິ່ງທີ່ ພຣະອົງ ພໍໃຈ.
ຈຸດເລີ່ມຕົ້ນອັນດີແມ່ນການອະທິຖານ
ຕາມແບບຢ່າງທີ່ ພຣະເຢຊູ ໄດ້ແນະນຳ
ໃຫ້ພວກລູກສິດ.

## ການອະທິຖານຕາມແບບຢ່າງທີ່ ພຣະເຢຊູ ໄດ້ແນະນຳໃຫ້ພວກລູກສິດ

ຈັ່ງຊັ້ນແຫຼະ ພວກທ່ານ ຄວນອ້ອນວອນດັ່ງນີ້:
"ຂ້າແດ່ ພຣະບິດາ ຂອງພວກຂ້ານ້ອຍທັງຫຼາຍ
ຜູ້ສະຖິດໃນສະຫວັນ: ຂໍໃຫ້ພຣະນາມເປັນທີ່ສັກກາລະບູຊາ,
ຂໍໃຫ້ພຣະອົງມາປົກຄອງໂລກນີ້ເຖີດ,
ຂໍໃຫ້ທຸກສິ່ງເທິງແຜ່ນດິນໂລກນີ້
ເປັນໄປຕາມພຣະປະສົງດັ່ງດຽວໃນສະຫວັນ.
ຂໍໂຜດອາຫານໃຫ້ໃນມື້ນີ້ ທີ່ພວກຂ້ານ້ອຍທັງຫຼາຍຕ້ອງການ
ຂໍໂຜດຍົກຄວາມຜິດ ທີ່ພວກຂ້ານ້ອຍທັງຫຼາຍໄດ້ທຳ
ດັ່ງພວກຂ້ານ້ອຍທັງຫຼາຍ ຍົກຄວາມຜິດ
ທີ່ຄົນອື່ນໄດ້ທຳຕໍ່ພວກຂ້ານ້ອຍທັງຫຼາຍນັ້ນ.
ຂໍຢ່ານຳໄປສູ່ການທົດລອງອັນໜັກ
ແຕ່ຂໍໂຜດຮັກສາໃຫ້ພົ້ນຈາກມານຮ້າຍ."

ມັດທາຍ 6:9-13





© Alongsiders International
www.alongsiders.org
Email: info@alongsiders.org